**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ນາຍົກລັດຖະມົນຕີ

ເລກທີ 41 /ນຍ
ນະຄອນຫຼວງວຽງຈັນ, ວັນທີ 15 ມີນາ 2022

# ຂໍ້ຕົກລົງ
## ວ່າດ້ວຍ ການກຳນົດເງື່ອນໄຂເງື່ອນໄຂເງື່ອນໄຂການອະນຸຍາດລົງທຶນ ປູກຕົ້ນປໍແກ້ວ ນຳໃຊ້ທາງການແພດ ແລະ ເປັນສິນຄ້າ (ໄລຍະທົດລອງ)

- ອີງຕາມ ກົດໝາຍວ່າດ້ວຍ ລັດຖະບານ ແຫ່ງ ສປປ ລາວ (ສະບັບປັບປຸງ) ສະບັບເລກທີ 04/ສພຊ, ລົງວັນທີ 8 ພະຈິກ 2016;
- ອີງຕາມ ມະຕິກອງປະຊຸມສະພາແຫ່ງຊາດ ວ່າດ້ວຍການຮັບຮອງເອົາວາລະແຫ່ງຊາດ ວ່າດ້ວຍການແກ້ໄຂຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນ ສະບັບເລກທີ 03/ສພຊ, ລົງວັນທີ 10 ສິງຫາ 2021;
- ອີງຕາມ ຂໍ້ຕົກລົງວ່າດ້ວຍ ລະບຽບການ ແລະ ກົນໄກການເຮັດວຽກຂອງລັດຖະບານ ຊຸດທີ IX ສະບັບເລກທີ 41/ນຍ, ລົງວັນທີ 30 ເມສາ 2021;
- ອີງຕາມ ເອກະສານລາຍງານຂອງກະຊວງແຜນການ ແລະ ການລົງທຶນ ສະບັບເລກທີ 0175/ກຜທ.ລທ3, ລົງວັນທີ 31 ມັງກອນ 2021;
- ອີງຕາມ ການຕົກລົງ ແລະ ທິດຊີ້ນຳຂອງກອງປະຊຸມນາຍົກ-ຮອງນາຍົກລັດຖະມົນຕີ ໃນວັນທີ 14-15 ກຸມພາ 2022.

**ນາຍົກລັດຖະມົນຕີ ຕົກລົງ:**

ມາດຕາ 1: ເງື່ອນໄຂການຂໍອະນຸຍາດລົງທຶນ ປູກຕົ້ນປໍແກ້ວ ນຳໃຊ້ທາງການແພດ ແລະ ເປັນສິນຄ້າ (ໄລຍະທົດລອງ) ມີດັ່ງນີ້:

1. ເງື່ອນໄຂການສະເໜີຂໍລົງທຶນ.
   - 1.1 ວິສາຫະກິດ ທີ່ສະເໜີຂໍລົງທຶນ ປູກຕົ້ນປໍແກ້ວ ຕາມຂໍ້ຕົກລົງສະບັບນີ້ ແມ່ນໃຫ້ດຳເນີນທຸລະກິດຕາມຈຸດປະສົງໃນການປູກເພື່ອສະກັດເປັນຢາ ແລະ ການປູກເພື່ອເປັນວັດຖຸດິບຜະລິດເປັນຜະລິດຕະພັນຈາກຕົ້ນປໍແກ້ວ.
   - 1.2 ເປັນວິສາຫະກິດພາຍໃນ ທີ່ຈົດທະບຽນວິສາຫະກິດ ຢູ່ ສປປ ລາວ;
   - 1.3 ຜູ້ບໍລິຫານ ແລະ ຜູ້ຖືຮຸ້ນຂອງວິສາຫະກິດດັ່ງກ່າວ ບໍ່ເຄີຍຖືກຄຳຕັດສິນ ຫຼື ຄຳພິພາກສາ ວ່າດ້ວຍການກະທຳຄວາມຜິດ ຕາມກົດໝາຍວ່າດ້ວຍ ຢາເສບຕິດ, ກົດໝາຍວ່າດ້ວຍ ວັດຖຸທີ່ອອກລິດຕໍ່ຈິດປະສາດ ແລະ ກົດໝາຍອື່ນໆຂອງ ສປປ ລາວ ຫຼື ສານຍຸຕິທຳຂອງຕ່າງປະເທດ ມາກ່ອນ ໂດຍມີການຢັ້ງຢືນເອກະສານໃບແຈ້ງໂທດ;

1.4 ໃນກໍລະນີ ມີຜູ້ຮ່ວມລົງທຶນຈາກຕ່າງປະເທດ ໃຫ້ມີການແຈ້ງປະຫວັດການເຄື່ອນໄຫວດ້ານກິດຈະການທຸລະກິດ ໄລຍະ 10 (ສິບ) ປີ ຜ່ານມາ ພ້ອມທັງສໍາເນົາໜັງສືຜ່ານແດນ;

1.5 ມີການຢັ້ງຢືນແຫຼ່ງທຶນ ທີ່ຈະນໍາໃຊ້ ໃນການລົງທຶນຕໍ່ກິດຈະການດັ່ງກ່າວ ໂດຍມີການຢັ້ງຢືນຈາກທະນາຄານທຸລະກິດໃດໜຶ່ງ ຂອງ ສປປ ລາວ ຫຼື ທະນາຄານ ແຫ່ງ ສປປ ລາວ;

1.6 ມີຂໍ້ມູນດ້ານເຕັກນິກ ແລະ ຜູ້ຊ່ຽວຊານ ໃນການຄຸ້ມຄອງການປູກ ແລະ ການປຸງແຕ່ງ ຕົ້ນປໍແກ້ວ;

1.7 ມີຂໍ້ມູນ ແລະ ການຢັ້ງຢືນດ້ານການຕະຫຼາດ ໃນການຈໍາໜ່າຍຜະລິດຕະພັນຈາກປໍແກ້ວ.

ບັນດາເງື່ອນໄຂເອກະສານທີ່ກ່າວມາຂ້າງເທິງ ຕ້ອງມີຫຼັກຖານຢັ້ງຢືນຕົວຈິງ ທາງດ້ານເອກະສານ, ທີ່ຢູ່ບ່ອນຕິດຕໍ່ໄດ້ ເພື່ອເປັນບ່ອນອີງໃນເວລາການກວດກາ ຂອງຂະບວນການພິຈາລະນາອະນຸຍາດ.

2. ການກໍານົດເຂດສໍາປະທານ ແລະ ອາຍຸສໍາປະທານ.

2.1 ເປັນເຂດທີ່ຍັງເປົ່າຫວ່າງ (ບໍ່ນອນໃນເຂດພື້ນທີ່ ລັດຖະບານໄດ້ອະນຸຍາດໃຫ້ບໍລິສັດອື່ນສໍາປະທານແລ້ວ) ໂດຍເຂດພື້ນທີ່ຂໍສໍາປະທານ ແມ່ນວິສາຫະກິດເປັນຜູ້ຮັບຜິດຊອບ ຈັດຫາເນື້ອທີ່ປູກເອງແລ້ວນໍາສະເໜີຕໍ່ລັດຖະບານ;

2.2 ມີຂໍ້ມູນ ແລະ ການຢັ້ງຢືນພື້ນທີ່ເຂດຂໍສໍາປະທານ ທີ່ຈະນໍາໃຊ້ເພື່ອປູກປໍແກ້ວ ໂດຍພື້ນທີ່ດັ່ງກ່າວມີການຢັ້ງຢືນຂອງອົງການປົກຄອງທ້ອງຖິ່ນ, ກະຊວງຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມ, ກະຊວງກະສິກໍາ ແລະ ປ່າໄມ້ ແລະ ກະຊວງປ້ອງກັນປະເທດ ເຫັນດີໃຫ້ນໍາໃຊ້ເນື້ອທີ່ດັ່ງກ່າວ;

2.3 ໃນກໍລະນີ ຫາກນໍາໃຊ້ທີ່ດິນຂອງບຸກຄົນ ຫຼື ນິຕິບຸກຄົນ ຕ້ອງມີໃບຢັ້ງຢືນສິດນໍາໃຊ້ທີ່ດິນ (ໃບຕາດິນ) ແລະ ໃຫ້ວິສາຫະກິດ ເປັນຜູ້ດໍາເນີນການຊົດເຊີຍເອງ;

2.4 ເນື້ອທີ່ສໍາປະທານ ປູກຕົ້ນປໍແກ້ວ ສູງສຸດບໍ່ເກີນ 100 (ໜຶ່ງຮ້ອຍ) ເຮັກຕາ ຕໍ່ໜຶ່ງວິສາຫະກິດ;

2.5 ອາຍຸສໍາປະທານ ໄລຍະທົດລອງ ບໍ່ເກີນ 05 (ຫ້າ) ປີ ແລະ ສາມາດຂໍຕໍ່ອາຍຸໄດ້ ໂດຍລັດຖະບານຈະທົບທວນໃນການຕໍ່ອາຍຸສັນຍາ. ສ່ວນການຈັດຕັ້ງປະຕິບັດ ແມ່ນຈະໄດ້ມີການປະເມີນຄືນໃນປີທີ 3.

3. ດ້ານສິ່ງແວດລ້ອມ.

3.1 ພາຍຫຼັງເຊັນສັນຍາສໍາປະທານແລ້ວ ວິສາຫະກິດ ຕ້ອງດໍາເນີນການສຶກສາ ແລະ ສ້າງແຜນຄຸ້ມຄອງສິ່ງແວດລ້ອມ, ທໍາມະຊາດ ແລະ ສັງຄົມ ຂອງການປູກຕົ້ນປໍແກ້ວ ໃນເນື້ອທີ່ສໍາປະທານຂອງຕົນເພື່ອນໍາສະເໜີຂະແໜງຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມ ຮັບຮອງເອົາພາຍໃນ 30 (ສາມສິບ) ວັນ ລັດຖະການ;

3.2 ໃນໄລຍະດໍາເນີນທຸລະກິດ ວິສາຫະກິດ ຕ້ອງສົ່ງບົດລາຍງານກ່ຽວກັບສິ່ງແວດລ້ອມ ປະຈໍາໄຕມາດ ແລະ ປະຈໍາປີ ໃຫ້ຂະແໜງຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມ ຢ່າງເປັນປະຈໍາ.

4. ດ້ານສາທາລະນະສຸກ.

4.1 ການປຸງແຕ່ງ, ສະກັດ, ຖອດຣິດ ແລະ ວິໄຈຄົ້ນຄວ້າວິທະຍາສາດ ເພື່ອນໍາໃຊ້ທາງການແພດ ແລະ ເປັນສິນຄ້າ ຕ້ອງນໍາສະເໜີໃຫ້ກະຊວງສາທາລະນະສຸກ ເພື່ອພິຈາລະນາຄົ້ນຄວ້າການອອກອະນຸຍາດ ຕາມລະບຽບການ;